ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 208 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 09.12.2016

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ( ສະບັບປັບປຸງ ປີ 2015 );
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 028/ສພຊ, ລົງວັນທີ 14 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 050/ຄປຈ, ລົງວັນທີ 28 ພະຈິກ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 028 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 / 11 / 16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງປີ 2015) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015) ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 14 ພະຈິກ 2016.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 10 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 ພະຈິກ 2016

# ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປີ 2015

ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປີ 2015) ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ແລະ ໄດ້ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 215/ປປທ, ລົງວັນທີ 16 ທັນວາ 2015.

ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ຈຶ່ງໄດ້ປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ດັ່ງນີ້:

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ**

ສະພາແຫ່ງຊາດ ມີ ສິດ ແລະໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານ ຂອງປະເທດຊາດ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ:

1.1. ພິຈາລະນາ, ຮັບຮອງເອົາ ບັນຫາຄວາມໝັ້ນຄົງ, ຄວາມປອດໄພ, ບັນຫາສົງຄາມ ຫຼື ສັນຕິພາບ ແລະ ການໃຫ້ນິລະໂທດກຳ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ;

1.2. ພິຈາລະນາ, ຮັບຮອງເອົາ ເຂດແດນຂອງ ແຂວງ, ນະຄອນຫຼວງ ຕາມການສະເໜີ ຂອງນາຍົກລັດຖະມົນຕີ;

1.3. ພິຈາລະນາ ຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີສະພາປະຊາຊົນນັ້ນ ຫາກໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

1.4. ລົງມະຕິບໍ່ໄວ້ວາງໃຈສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ:

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ການຈັດແບ່ງງົບປະມານລະຫວ່າງສູນກາງ ແລະ ທ້ອງຖິ່ນ, ການດັດແກ້ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນການລົງທຶນຂອງລັດ;

2.2. ພິຈາລະນາ, ຮັບຮອງເອົາ ນະໂຍບາຍພື້ນຖານດ້ານການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.3. ພິຈາລະນາ, ຮັບຮອງເອົາ ການກຳນົດ, ການປ່ຽນແປງ, ການຍົກເລີກ, ການລົບລ້າງອັດຕາພາສີ ແລະ ອາກອນ;

2.4. ພິຈາລະນາ, ຮັບຮອງເອົາ ໂຄງການລະດັບຊາດ, ໂຄງການຂະໜາດໃຫຍ່ ທີ່ມີຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ;

2.5. ພິຈາລະນາ, ຮັບຮອງເອົາ ບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ:

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາແຫ່ງຊາດ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກຳມາທິການ ແລະ ຄະນະເລຂາທິການ ສະພາແຫ່ງຊາດ;

3.1.2. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງ ລັດຖະບານ;

3.1.3. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຕາມການສະເໜີຂອງນາຍົກລັດຖະມົນຕີ.

3.2 ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານ, ຮອງປະທານ, ກຳມະການຄະນະປະຈຳສະພາແຫ່ງຊາດ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.3. ເລືອກຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

3.2.4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

3.2.5. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕໍາແໜ່ງ ປະທານ, ຮອງປະທານກໍາມາທິການ ແລະ ເລຂາທິການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈໍາສະພາແຫ່ງຊາດ;

3.2.6. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕໍາແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຕາມການສະເໜີຂອງ ນາຍົກລັດຖະມົນຕີ;

3.2.7. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕໍາແໜ່ງ ສະມາຊິກສະພາຜູ້ພິພາກສາ ຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

## ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ ດັ່ງນີ້:

1. ຕິດຕາມກວດກາ ການປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລະດັບຊາດ ແລະ ໂຄງການຂະໜາດໃຫຍ່ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ບຸກຄະລາກອນ ທີ່ສະພາແຫ່ງຊາດຮັບຮອງເອົາການແຕ່ງຕັ້ງ;

3. ຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບບົດລາຍງານການເຄື່ອນໄຫວວຽກງານ ແລະ ທິດທາງແຜນການເຄື່ອນໄຫວວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ອົງການກວດສອບແຫ່ງລັດ;

4. ຕິດຕາມກວດກາ ສະພາປະຊາຊົນຂັ້ນແຂວງ ໃນການເຄົາລົບ ແລະ ປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈໍາສະພາແຫ່ງຊາດ;

5. ໃຫ້ຄະແນນ ເພື່ອປະເມີນຜົນຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ. ສໍາລັບວິທີການ ແລະ ລະບຽບການກ່ຽວກັບການໃຫ້ຄະແນນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 29 (ປັບປຸງ) ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ໄດ້ຮັບນະໂຍບາຍຂອງລັດ ທີ່ໄດ້ກໍານົດອອກໃນແຕ່ລະໄລຍະ.

ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະປະຈໍາສະພາແຫ່ງຊາດ

ຄະນະປະຈໍາສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານນິຕິບັນຍັດ:

1.1. ຕີຄວາມໝາຍ ແລະ ອະທິບາຍ ລັດຖະທໍາມະນູນ, ກົດໝາຍ;

1.2. ຄົ້ນຄວ້າການສ້າງ ແລະ ປັບປຸງກົດໝາຍ ເພື່ອນໍາສະເໜີ ຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາ;

1.3. ຄົ້ນຄວ້າ, ພິຈາລະນາ ແລະ ສ້າງລັດຖະບັນຍັດ ແລ້ວສະເໜີຕໍ່ປະທານປະເທດ ພິຈາລະນາລົງລາຍເຊັນປະກາດໃຊ້;

1.4. ຊີ້ນໍາ ການໂຄສະນາ, ເຜີຍແຜ່ ລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາອື່ນ;

1.5. ອອກມະຕິ, ຂໍ້ຕົກລົງ, ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;

1.6. ຕົກລົງກ່ຽວກັບການໃຫ້ສັດຕະຍາບັນແກ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນໃນລະດັບລັດ ຕາມການສະເໜີຂອງນາຍົກລັດຖະມົນຕີ;

1.7. ແຕ່ງຕັ້ງ, ຍຸບເລີກ ຄະນະລັດຖະສະພາຕ່າງປະເທດ, ພາກພື້ນ ແລະ ສາກົນຂອງສະພາແຫ່ງຊາດ;

1.8. ສ້າງ ແລະ ສະເໜີກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ທິດທາງວຽກງານ ປະຈໍາປີ ແລະ ຫ້າປີ ຂອງສະພາແຫ່ງຊາດ;

1.9. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຮ່ວມກັບລັດຖະບານ ແລະ ອົງການຍຸຕິທໍາ ແລະ ກົດໝາຍ.

2. ດ້ານການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ:

2.1. ດ້ານການເມືອງ ແລະ ການປົກຄອງ:

2.1.1. ສະເໜີສະພາແຫ່ງຊາດ ພິຈາລະນາ, ຕົກລົງບັນຫາ ສົງຄາມ ຫຼື ສັນຕິພາບ;

2.1.2. ພົວພັນ, ຮ່ວມມືກັບການຈັດຕັ້ງລັດຖະສະພາຕ່າງປະເທດ, ພາກພື້ນ ແລະ ສາກົນ;

2.1.3. ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ ໃນລະຫວ່າງສອງກອງປະຊຸມ;

2.1.4. ຄົ້ນຄວ້າ ການຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີ ສະພາປະຊາຊົນນັ້ນ ຫາກສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ຕາມການສະເໜີ ຂອງແນວລາວສ້າງຊາດ ແລະ ການຈັດຕັ້ງມະຊົນຂັ້ນແຂວງດັ່ງກ່າວ.

2.2. ດ້ານເສດຖະກິດ-ສັງຄົມ:

2.2.1. ຄົ້ນຄວ້າແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;

2.2.2. ຄົ້ນຄວ້າ ນະໂຍບາຍພື້ນຖານດ້ານ ການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.2.3. ຄົ້ນຄວ້າ ພິຈາລະນາ ຍົກເວັ້ນ ອັດຕາພາສີ ແລະ ອາກອນ;

2.2.4. ຄົ້ນຄວ້າ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈໍາປີ ເພື່ອນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ.

2.3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ:

2.3.1. ດ້ານການຈັດຕັ້ງ

2.3.1.1. ຄົ້ນຄວ້າ ໂຄງປະກອບ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງການຈັດຕັ້ງຂອງສະພາແຫ່ງຊາດ ແລະ ຂອງຄະນະປະຈໍາສະພາແຫ່ງຊາດ;

2.3.1.2. ແຕ່ງຕັ້ງ ຄະນະກໍາມະການເລືອກຕັ້ງລະດັບຊາດ ແລະ ກະກຽມການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່.

2.3.2. ດ້ານບຸກຄະລາກອນ

2.3.2.1. ພິຈາລະນາການແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍ ແລະ ລົງວິໄນ ສະມາຊິກສະພາແຫ່ງຊາດ; ສະມາຊິກສະພາແຫ່ງຊາດ ປະຈໍາການ ໄປຮັບຜິດຊອບວຽກງານອື່ນ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ;

2.3.2.2. ບັນຈຸ, ສັບຊ້ອນ ສະມາຊິກສະພາແຫ່ງຊາດ ສັງກັດໃນແຕ່ລະກໍາມາທິການ;

2.3.2.3. ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ຮອງເລຂາທິການສະພາແຫ່ງຊາດ, ປະທານ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດເພດຍິງ, ຫົວໜ້າ, ຮອງຫົວໜ້າ ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ, ຫົວໜ້າ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກໍາສະພາແຫ່ງຊາດ, ປະທານ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ຫົວໜ້າກົມ ແລະ ຫົວໜ້າອົງການລັດທຽບເທົ່າກົມ ແລະ ຮອງຫົວໜ້າກົມ ແລະ ຮອງຫົວໜ້າ ອົງການລັດທຽບເທົ່າກົມ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຜູ້ພິພາກສາ ຂອງສານປະຊາຊົນສູງສຸດ, ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານ, ຜູ້ພິພາກສາ ສານປະຊາຊົນພາກ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

2.3.2.5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ປະທານອົງການກວດສອບປະຈໍາພາກ ຕາມການສະເໜີຂອງປະທານອົງການກວດສອບແຫ່ງລັດ;

2.3.2.6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານ ແລະ ຜູ້ພິພາກ ສາຂອງສານປະຊາຊົນ ແຂວງ, ນະຄອນຫຼວງ, ເຂດ ຫຼື ເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

2.3.2.7. ແຕ່ງຕັ້ງ ສະມາຊິກສະພາຜູ້ພິພາກສາ ພາຍຫຼັງກອງປະຊຸມສະພາແຫ່ງຊາດ ໄດ້ຮັບຮອງເອົາ ຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ, ແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

3. ດ້ານການຕິດຕາມກວດກາ:

3.1. ຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການຂອງລັດຖະບານ;

3.2. ຕິດຕາມກວດກາ ການເຄື່ອນໄຫວຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ;

3.3. ໂຈະ ການຈັດຕັ້ງປະຕິບັດນິຕິກຳ ຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ ແລະ ປະທານສະພາປະຊາຊົນຂັ້ນແຂວງ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ຍົກເວັ້ນຄຳຕັດສິນ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ;

3.4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ຂອງປະຊາຊົນ.

**ມາດຕາ 34 (ປັບປຸງ) ຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ:

1. ປະທານ;
2. ຮອງປະທານ;
3. ກຳມະການ;

ປະທານ ແລະ ຮອງປະທານສະພາແຫ່ງຊາດ ເປັນທັງ ປະທານ ແລະ ຮອງປະທານຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 36 (ປັບປຸງ) ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ**

ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ມີ ດັ່ງນີ້:

1. ຄະນະສະມາຊິກສະພາແຫ່ງຊາດ ເພດຍິງ;
2. ຄະນະຮັບຜິດຊອບວຽກງານເຂດເລືອກຕັ້ງ;

3. ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

4. ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ.

ໃນກໍລະນີ ມີຄວາມຈຳເປັນ ຄະນະປະຈຳສະພາແຫ່ງຊາດ ອາດສ້າງຕັ້ງກົງຈັກອື່ນ ຂອງຕົນຂຶ້ນ ຕື່ມອີກກໍໄດ້.

**ມາດຕາ 49 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະເລຂາທິການສະພາແຫ່ງຊາດ**

ຄະນະເລຂາທິການສະພາແຫ່ງຊາດ ແມ່ນ ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ມີພາລະບົດບາດ ເປັນເສນາທິການໃຫ້ ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດໃນການ ຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ຄຸ້ມຄອງວຽກງານບໍລິຫານ, ແຜນການ, ການເງິນ, ການຈັດຕັ້ງ-ພະນັກງານ ແລະ ວຽກງານອື່ນ ຕາມການມອບໝາຍຂອງຄະນະປະຈຳ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະເລຂາທິການສະພາແຫ່ງຊາດ**

ຄະນະເລຂາທິການສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານການຄົ້ນຄວ້າ-ສັງລວມເນື້ອໃນ

1.1. ສຳລັບສະພາແຫ່ງຊາດ:

1.1.1. ຄົ້ນຄວ້າສ້າງຮ່າງແຜນການ ແລະ ສະຫຼຸບການເຄື່ອນໄຫວວຽກງານປະຈຳຫ້າປີ, ປະຈຳໜຶ່ງປີ ແລະ ປະຈຳທຶກເດືອນຂອງສະພາແຫ່ງຊາດ;

1.1.2. ຄົ້ນຄວ້າ ສ້າງຮ່າງແຜນການ, ຕາຕະລາງ, ແຜນບັນຊາ, ຮ່າງສູນທອນພິດກ່າວເປີດ, ກ່າວປິດ, ຮ່າງບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ, ຮ່າງມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະ ເອກະສານອື່ນ ເພື່ອຮັບໃຊ້ກອງປະຊຸມສະພາແຫ່ງຊາດ;

1.1.3. ສັງລວມ ຂໍ້ຊັກຖາມຂອງສະມາຊິກສະພາແຫ່ງຊາດ, ການຊີ້ແຈງຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ບັນທຶກກອງປະຊຸມ ແລ້ວລາຍງານເນື້ອໃນຕ່າງໆ ຂອງກອງປະຊຸມສະພາແຫ່ງຊາດ ໃຫ້ປະທານກອງປະຊຸມຢ່າງທັນການ;

1.1.4. ສະເໜີຮ່າງມະຕິຂອງກອງປະຊຸມສະພາແຫ່ງຊາດ ເພື່ອໃຫ້ກອງປະຊຸມພິຈາລະນາຮັບຮອງເອົາ;

1.1.5. ຮ່າງຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ;

1.1.6. ສັງລວມເນື້ອໃນໂທລະສັບສາຍດ່ວນ ແລ້ວນຳສະເໜີຄະນະປະທານກອງປະຊຸມສະພາແຫ່ງຊາດ ເພື່ອມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ສົມທົບກັບຂະແໜງການພິຈາລະນາແກ້ໄຂ;

1.1.7. ຮ່າງບົດສະຫຼຸບ ລາຍງານຜົນສຳເລັດ ຂອງກອງປະຊຸມສະພາແຫ່ງຊາດ.

1.2. ສຳລັບຄະນະປະຈຳສະພາແຫ່ງຊາດ:

1.2.1. ຄົ້ນຄວ້າ ສ້າງຮ່າງແຜນການ, ຕາຕະລາງ ແລະ ເອກະສານອື່ນ ເພື່ອຮັບໃຊ້ກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

1.2.2. ສັງລວມຄຳເຫັນ ຂອງກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ບັນທຶກກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

1.2.3. ຮ່າງຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ;

1.2.4. ຮ່າງຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ;

1.2.5. ສ້າງແຜນການ ແລະ ສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳເດືອນ, ປະຈຳທຶກເດືອນ ແລະ ປະຈຳປີ ຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ.

2. ດ້ານການຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ:

2.1. ຂຶ້ນແຜນການ, ງົບປະມານຂອງສະພາແຫ່ງຊາດ ເພື່ອສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;

2.2. ອອກແຈ້ງການ ແລະ ຄຳແນະນຳ ໃນການຄຸ້ມຄອງບໍລິຫານ;

2.3. ຊີ້ນຳວຽກງານຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນຂອງກົມ ແລະ ອົງການລັດທຽບເທົ່າກົມພາຍໃນສະພາແຫ່ງຊາດ;

2.4. ພົວພັນ ແລະ ປະສານສົມທົບ ກັບກຳມາທິການຂອງສະພາແຫ່ງຊາດ ແລະ ອົງການຈັດຕັ້ງອື່ນ ກ່ຽວກັບການຄຸ້ມຄອງ ບໍລິຫານ, ແຜນການ ແລະ ການເງິນ;

2.5. ຄຸ້ມຄອງການນຳໃຊ້ ພາຫະນະ, ວັດຖຸປະກອນ ແລະ ຊັບສິນອື່ນ ຂອງສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;

2.6. ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ກິດຈະກຳ ຂອງຄະນະປະຈຳສະພາແຫ່ງຊາດ.

3. ດ້ານການຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ:

3.1. ສ້າງແຜນການບຳລຸງສ້າງ, ຍົກລະດັບ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ;

3.2. ຈັດຕັ້ງ, ນຳພາ, ຄຸ້ມຄອງພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ;

3.3. ຈັດຕັ້ງກອງປະຊຸມ, ສຳມະນາ ເພື່ອຍົກລະດັບ ແລະ ລະດົມຄຳຄິດເຫັນຕໍ່ບັນຫາໃດໜຶ່ງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

4. ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນ ສຳນັກງານສະພາແຫ່ງຊາດ;

5. ພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການຊີ້ນຳ ຂອງຄະນະປະຈຳສະພາແຫ່ງຊາດ;

6. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 56 (ປັບປຸງ) ກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດ ມີກອງປະຊຸມ ສາມ ປະເພດ ດັ່ງນີ້:

1. ກອງປະຊຸມຄັ້ງປະຖົມມະລຶກ;
2. ກອງປະຊຸມສະໄໝສາມັນ ປະຈຳປີ;
3. ກອງປະຊຸມສະໄໝວິສາມັນ.

ກອງປະຊຸມຄັ້ງປະຖົມມະລຶກ ເປັນກອງປະຊຸມສະໄໝສາມັນເທື່ອທີໜຶ່ງ ຂອງສະພາແຫ່ງຊາດແຕ່ລະຊຸດ.

**ມາດຕາ 58 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ເປີດກອງປະຊຸມສະໄໝສາມັນ ປີລະ ສອງຄັ້ງ ໂດຍຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກົກລົງ ແລະ ຮຽກໂຮມ.

**ມາດຕາ 59 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີໜຶ່ງ ຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີໜຶ່ງ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຫົກເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຫົກເດືອນທ້າຍປີ, ການດັດແກ້ແຜນງົບປະມານແຫ່ງລັດ ປະຈຳສົກປີ ໃນກໍລະນີທີ່ລັດຖະບານສະເໜີມາ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາແຫ່ງຊາດ ໃນລະຫວ່າງສອງກອງປະຊຸມຜ່ານມາ ແລະໃນຕໍ່ໜ້າ;

4. ຮັບຟັງການລາຍງານຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

5. ຮັບຟັງການລາຍງານບັນຫາໃດໜຶ່ງ ທີ່ພົ້ນເດັ່ນ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

6. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານກຳມາທິການ ແລະ ເລຂາທິການສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານອື່ນທີ່ສຳຄັນ;

8. ມອບສິດໃຫ້ຄະປະຈຳສະພາແຫ່ງຊາດ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ.

**ມາດຕາ 60 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີສອງ ຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນປະຈຳປີ ຄັ້ງທີສອງ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີຜ່ານມາ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປະຈຳປີຕໍ່ໜ້າ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຜົນຂອງການກວດສອບ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີ ຂອງອົງການກວດສອບແຫ່ງລັດ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

4. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງສະພາແຫ່ງຊາດ;

5. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

6. ຊັກຖາມ ຄະນະປະຈຳ, ປະທານ, ຮອງປະທານກຳມາທິການ ແລະ ເລຂາທິການສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວ

ໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານ ອື່ນທີ່ສຳຄັນ;

8. ມອບສິດໃຫ້ຄະນະປະຈຳສະພາແຫ່ງຊາດ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ.

**ມາດຕາ 104 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ມາດຕາ 12, 13, 29, 33, 34, 36, 49, 50, 56, 58, 59 ແລະ ມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 64 /ສພຊ, ລົງວັນທີ 9 ທັນວາ 2015.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້